ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>　　　　　　　　　　ເລກທີ 68 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 28.04.2008

# ດຳລັດ

## ວ່າດ້ວຍການຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2007.

- ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005.

- ອີງຕາມການສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1557/ອກ, ລົງວັນທີ 31 ສິງຫາ 2007.

### ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ 1</u> : ຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ ຕາມເອກະສານຄັດຕິດ “ ກ ” ຂອງດຳລັດສະບັບນີ້.

<u>ມາດຕາ 2</u> : ບັນຊີປະເພດທຸລະກິດຄວບຄຸມ ໝາຍເຖິງບັນຊີປະເພດທຸລະກິດ ທີ່ມີຄວາມອ່ອນໄຫວສູງ, ເປັນຕົ້ນ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສະພາວະແວດລ້ອມ, ຊຶ່ງຈຳເປັນຕ້ອງໄດ້ຮັບການພິຈາລະນາ ກວດສອບຜ່ານຂະແໜງການກ່ຽວຂ້ອງ ກ່ອນການຂຶ້ນທະບຽນວິສາຫະກິດ. ແຕ່ບັນຊີປະເພດທຸລະກິດຄວບຄຸມ ບໍ່ແມ່ນບັນຊີປະເພດທຸລະກິດເກືອດຫ້າມ ການດຳເນີນທຸລະກິດ ຢູ່ ສປປ ລາວ.

<u>ມາດຕາ 3</u> : ລັດຖະບານ ແຫ່ງ ສປປ ລາວ ສົ່ງເສີມການລົງທຶນ ແລະ ການປະກອບອາຊີບຂອງປະຊາຊົນລາວ ໃຫ້ຂະຫຍາຍຕົວຢ່າງແຂງແຮງ, ໂດຍຜ່ານລະບົບການຂຶ້ນທະບຽນຜ່ານປະຕູດຽວ ທີ່ສະດວກວ່ອງໄວ ແລະ ງ່າຍດາຍ, ໝາຍຄວາມວ່າ :

- ປະເພດທຸລະກິດ ທີ່ຈະຂຶ້ນທະບຽນວິສາຫະກິດ ຫາກບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງການຄ້າ ຕ້ອງພິຈາລະນາ ກ່ຽວກັບການອອກທະບຽນໃຫ້ວິສາຫະກິດ ໂດຍບໍ່ຜ່ານການພິຈາລະນາ ແລະ ກວດສອບ ຂອງຂະແໜງການທີ່

ກ່ຽວຂ້ອງ ຢ່າງຊ້າບໍ່ໃຫ້ເກີນສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

- ປະເພດທຸລະກິດທີ່ຈະຂຶ້ນທະບຽນວິສາຫະກິດ ຫາກນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ຂະແໜງການຄ້າ ຕ້ອງສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງໃນທັນໃດ. ຂະແໜງການດັ່ງກ່າວ ຕ້ອງພິຈາລະນາ ແລະ ຕອບຢ່າງຊ້າບໍ່ໃຫ້ເກີນສິບວັນລັດຖະການ, ເວັ້ນເສຍແຕ່ບາງປະເພດທຸລະກິດ ທີ່ມີຄວາມຈໍາເປັນຕ້ອງກວດສອບຜ່ານທາງດ້ານເຕັກນິກ ຫຼື ວິຊາການ ທີ່ຕ້ອງໃຊ້ເວລາຫລາຍກວ່ານັ້ນ, ຫລັງຈາກນັ້ນ ຂະແໜງການຄ້າຕ້ອງພິຈາລະນາ ກ່ຽວກັບການອອກທະບຽນວິສາຫະກິດ ຢ່າງຊ້າບໍ່ໃຫ້ເກີນສາມວັນລັດຖະການ. ຖ້າບໍ່ອອກທະບຽນໃຫ້ວິສາຫະກິດນັ້ນ ຕ້ອງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ຜູ້ຍື່ນຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຊາບ.

<u>ມາດຕາ 4</u> : ໃຫ້ຂະແໜງການທີ່ກ່ຽວຂ້ອງ ປັບປຸງ ຫຼື ອອກນິຕິກໍາ ກ່ຽວກັບຂັ້ນຕອນການພິຈາລະນາ ແລະ ການກວດສອບ ກ່ອນການຂຶ້ນທະບຽນວິສາຫະກິດຕໍ່ປະເພດທຸລະກິດ ທີ່ນອນຢູ່ໃນບັນຊີຄວບຄຸມຂອງຂະແໜງການຕົນ ໃຫ້ລະອຽດ ຈະແຈ້ງ ງ່າຍດາຍ ຕາມກໍານົດເວລາ ທີ່ໄດ້ບົ່ງໄວ້ໃນວັກສອງ ມາດຕາ 14 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ດໍາລັດ ສະບັບນີ້.

<u>ມາດຕາ 5</u> : ບັນດາຂະແໜງການທີ່ກ່ຽວຂ້ອງ ສາມາດສະເໜີໃຫ້ລັດຖະບານ ພິຈາລະນາເພີ່ມ ຫຼື ຫລຸດລາຍການປະເພດທຸລະກິດ ທີ່ຂະແໜງການຕົນຮັບຜິດຊອບ ໃນບັນຊີປະເພດທຸລະກິດຄວບຄຸມໄດ້ ຕາມຄວາມເໝາະສົມ ແລະ ຄວາມຈໍາເປັນໃນແຕ່ລະໄລຍະ.

ຫ້າມບໍ່ໃຫ້ພາກສ່ວນໃດເພີ່ມ ຫຼື ຫລຸດບັນຊີລາຍການປະເພດທຸລະກິດຄວບຄຸມ ຫຼື ເພີ່ມກໍານົດເວລາ ໃນການພິຈາລະນາອອກທະບຽນວິສາຫະກິດ ໂດຍຂັດກັບກົດໝາຍ ວ່າດ້ວຍວິສາຫະກິດ ແລະ ດໍາລັດສະບັບນີ້. ໃນກໍລະນີລະເມີດ ໃຫ້ນໍາໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ ຢ່າງເຂັ້ມງວດ.

<u>ມາດຕາ 6</u> : ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ລົບລ້າງນິຕິກໍາ, ລະບຽບການ ແລະ ຂັ້ນຕອນການພິຈາລະນາ, ການກວດສອບ ຫຼື ການອອກອະນຸຍາດຂອງຂະແໜງການຕົນ ກ່ອນການຂຶ້ນທະບຽນວິສາຫະກິດ ຕໍ່ທຸກປະເພດທຸລະກິດ ທີ່ບໍ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ.

<u>ມາດຕາ 7</u> : ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນ ປັບປຸງນິຕິກໍາຂອງຕົນທີ່ມີແລ້ວ ຫຼື ອອກນິຕິກໍາໃໝ່ ທີ່ເຫັນວ່າຈໍາເປັນ ໃຫ້ຈະແຈ້ງ ຮັດກຸມ ແລະ ສອດຄ່ອງກັບກົດໝາຍ ແລະ ນິຕິກໍາອື່ນໆ ຂອງລັດຖະບານ ເພື່ອເພີ່ມທະວີການຄຸ້ມຄອງດັດສົມການເຄື່ອນໄຫວທຸລະກິດ ຂອງວິສາຫະກິດ ທີ່ຂະແໜງການຕົນຮັບຜິດຊອບ ທີ່ໄດ້ຂຶ້ນທະບຽນແລ້ວ ເຊັ່ນ: ການກໍານົດເງື່ອນໄຂ ເຄື່ອນໄຫວທຸລະກິດໃດໜຶ່ງ, ການກວດສອບ, ການຢັ້ງຢືນ, ການຮັບຮອງ ຫຼື ການອອກອະນຸຍາດຕໍ່ ທັງປະເພດທຸລະກິດທີ່ຢູ່ໃນ ແລະ ຢູ່ນອກບັນຊີປະເພດທຸລະກິດຄວບຄຸມ ຕາມທີ່ໄດ້ກໍານົດໄວ້ໃນວັກສອງ ມາດຕາ 230 ຂອງກົດໝາຍວ່າດ້ວຍວິສາຫະກິດ.

<u>ມາດຕາ 8</u> : ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນໃຈກາງ ໃນການເຜີຍແຜ່ ແນະນໍາ ແລະ ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ. ໃຫ້ບັນດາ

ກະຊວງ, ອົງການ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 9</u> : ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ

# ເອກະສານຄັດຕິດ "ກ"
# ບັນຊີປະເພດທຸລະກິດຄວບຄຸມ ຫຼື ບັນຊີປະເພດທຸລະກິດ
# ທີ່ຕ້ອງກວດສອບຜ່ານຂະແໜງການກ່ຽວຂ້ອງ ກ່ອນການຂຶ້ນທະບຽນວິສາຫະກິດ
## (ຕາມຂີດໝາຍໜ້າສາມ ມາດຕາ 2 ຂອງກົດໝາຍວ່າດ້ວຍວິສາຫະກິດ)

| ຂະແໜງການ | ເລກລະຫັດຂອງ ISIC | ປະເພດທຸລະກິດ | ພາກສ່ວນຮັບຜິດຊອບ |
|---|---|---|---|
| ກະສິກຳ, ປ່າໄມ້ ແລະ ການປະມົງ | | | |
| | 0170 | ການລ່າເນື້ອ, ຫ້າງແຮ້ວ ແລະ ກິດຈະກຳບໍລິການ ທີ່ກ່ຽວພັນ | ກ/ຊ ກະສິກຳ ແລະ ປ່າໄມ້ |
| | 0210 | ການປູກໄມ້ ແລະ ການເຄື່ອນໄຫວ ກ່ຽວກັບປ່າໄມ້ | ກ/ຊ ກະສິກຳ ແລະ ປ່າໄມ້ |
| | 0220 | ການຂຸດຄົ້ນໄມ້ | ກ/ຊ ກະສິກຳ ແລະ ປ່າໄມ້ |
| | 0230 | ການເກັບຜະລິດຕະພັນຈາກປ່າໄມ້ | ກ/ຊ ກະສິກຳ ແລະ ປ່າໄມ້ |
| | 0312 | ການປະມົງໃນແມ່ນໍ້າ | ກ/ຊ ກະສິກຳ ແລະ ປ່າໄມ້ |
| ການຂຸດຄົ້ນແຮ່ປະເພດຕ່າງໆ ແລະ ຫີນ-ຊາຍ | | | |
| | 0510 | ການຂຸດຄົ້ນຖ່ານຫີນເຄົ້າ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0520 | ການຂຸດຄົ້ນລິກໄນ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0610 | ການຂຸດຄົ້ນນໍ້າມັນດິບ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0620 | ການຂຸດຄົ້ນອາຍແກສທຳມະຊາດ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0710 | ການຂຸດຄົ້ນແຮ່ເຫຼັກ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0721 | ການຂຸດຄົ້ນແຮ່ຢູເຣນຽມ ແລະ ທໍຣຽມ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0729 | ການຂຸດຄົ້ນແຮ່ໂລຫະອື່ນໆທີ່ບໍ່ແມ່ນເຫຼັກ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0810 | ການຂຸດຄົ້ນຫີນ, ຫີນຊາຍ ແລະ ດິນໜຽວ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0891 | ການຂຸດຄົ້ນແຮ່ທາດເຄມີ ແລະ ແຮ່ທາດຝຸ່ນຊີວະພາບ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0892 | ການຂຸດຄົ້ນຖ່ານຕົມຕົກຂ້ອນ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0893 | ການຂຸດຄົ້ນເກືອ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| | 0899 | ການຂຸດຄົ້ນແຮ່ ແລະ ຫີນອື່ນໆທີ່ບໍ່ໄດ້ຈັດເຂົ້າບ່ອນໃດ | ກ/ຊ ພະລັງງານ ແລະ ບໍ່ແຮ່ |

### ການສະໜອງໄຟຟ້າ, ອາຍແກສ, ອາຍຮ້ອນ ແລະ ອາກາດປັບແຕ່ງ

| | | |
|---|---|---|
| 3510 | ການຜະລິດ, ສົ່ງ ແລະ ແຈກຈ່າຍກະແສໄຟຟ້າ | ກ/ຊ ພະລັງງານ ແລະ ບໍ່ແຮ່ |
| 3520 | ການຜະລິດອາຍແກສ, ແຈກຈ່າຍອາຍແກສ ຜ່ານທໍ່ສົ່ງໃຫຍ່ | ກ/ຊ ພະລັງງານ ແລະ ບໍ່ແຮ່ |

### ການສະໜອງນໍ້າ, ການບໍາບັດສິ່ງໂສໂຄກທາງທໍ່ລະບາຍ, ການຄຸ້ມຄອງສິ່ງເສດເຫຼືອ ແລະ ກິດຈະການປັບປຸງແກ້ໄຂ ຕ່າງໆ

| | | |
|---|---|---|
| 3600 | ການເກັບຮັກສາ, ບໍາບັດ ແລະ ສະໜອງນໍ້າ | ກ/ຊ ຄຂປກ |
| 3700 | ການບໍາບັດສິ່ງໂສໂຄກທາງທໍ່ລະບາຍ | ກ/ຊ ຄຂປກ |
| 3812 | ການເກັບມ້ຽນສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ກ/ຊ ຄຂປກ |
| 3822 | ການຮັກສາ ແລະ ການກໍາຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ກ/ຊ ຄຂປກ |

### ການຂົນສົ່ງ ແລະ ການສະສົມສິນຄ້າ

| | | |
|---|---|---|
| 4911 | ການຂົນສົ່ງຜູ້ໂດຍສານ ທາງລົດໄຟ | ກ/ຊ ຄຂປກ |
| 4912 | ການຂົນສົ່ງສິນຄ້າ ທາງລົດໄຟ | ກ/ຊ ຄຂປກ |
| 4930 | ການຂົນສົ່ງທາງທໍ່ | ກ/ຊ ຄຂປກ |
| 5110 | ການຂົນສົ່ງຜູ້ໂດຍສານ ທາງອາກາດ | ກ/ຊ ຄຂປກ |
| 5120 | ການຂົນສົ່ງສິນຄ້າ ທາງອາກາດ | ກ/ຊ ຄຂປກ |
| 5310 | ການເຄື່ອນໄຫວດ້ານໄປສະນີ | ກ/ຊ ຄຂປກ |

### ຂໍ້ມູນຂ່າວສານ ແລະ ໂທລະຄົມມະນາຄົມ

| | | |
|---|---|---|
| 5811 | ການພິມປຶ້ມອ່ານ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |
| 5813 | ການພິມຂ່າວສານໜັງສືພິມ, ບົດຄວາມ ແລະ ວາລະສານ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |
| 5911 | ການຜະລິດ ຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |
| 5912 | ການເຕີມແຕ່ງຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |
| 5913 | ກິດຈະກໍາ ແຈກຈ່າຍຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |

| | | |
|---|---|---|
| 5920 | ກິດຈະກຳ ຈັດພິມປຶດເພັງ ແລະ ບັນທຶກສຽງ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທຳ |
| 6010 | ການອອກອາກາດທາງວິທະຍຸ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທຳ |
| 6021 | ການອອກອາກາດທາງໂທລະພາບ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທຳ |
| 6022 | ການເຊົ່າຊື້ລາຍການຜ່ານທາງ ເຄເບີນ, ດາວທຽມ ແລະ ອື່ນໆ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທຳ |
| 6110 | ການບໍລິການ ໂທລະຄົມມະນາຄົມແບບໃຊ້ສາຍ | ກ/ຊ ຄຂປກ |
| 6120 | ການບໍລິການ ໂທລະຄົມມະນາຄົມແບບບໍ່ໃຊ້ສາຍ | ກ/ຊ ຄຂປກ |
| 6130 | ການບໍລິການ ໂທລະຄົມມະນາຄົມຜ່ານດາວທຽມ | ກ/ຊ ຄຂປກ |
| 6190 | ການບໍລິການ ໂທລະຄົມມະນາຄົມ ແບບອື່ນໆ | ກ/ຊ ຄຂປກ |

ກິດຈະກຳດ້ານການເງິນ ແລະ ການປະກັນໄພ

| | | |
|---|---|---|
| 6411 | ກິດຈະກຳ ທະນາຄານກາງ | ທະນາຄານແຫ່ງ ສປປລາວ |
| 6419 | ການບໍລິການເປັນສື່ກາງດ້ານການເງິນອື່ນໆ | ທະນາຄານແຫ່ງ ສປປລາວ |
| 6420 | ບໍລິສັດຖືຮຸ້ນ | ກະຊວງການເງິນ |
| 6430 | ຄັງເງິນ, ກອງທຶນ ແລະ ກົງຈັກການເງິນອື່ນໆ | ທະນາຄານແຫ່ງ ສປປລາວ |
| 6491 | ການເຊົ່າສິນເຊື່ອ | ທະນາຄານແຫ່ງ ສປປລາວ |
| 6492 | ການໃຫ້ສິນເຊື່ອອື່ນໆ | ທະນາຄານແຫ່ງ ສປປລາວ |
| 6499 | ກິດຈະກຳ ບໍລິການ ດ້ານການເງິນອື່ນໆ ຍົກເວັ້ນ ການເຄື່ອນໄຫວປະກັນໄພ ແລະ ຄັງບຳນານ | ທະນາຄານແຫ່ງ ສປປລາວ |
| 6511 | ການປະກັນຊີວິດ | ກະຊວງການເງິນ |
| 6512 | ການປະກັນໄພອື່ນໆ ນອກຈາກການປະກັນຊີວິດ | ກະຊວງການເງິນ |
| 6520 | ການປະກັນໄພຮັບຊ່ວງຕໍ່ | ກະຊວງການເງິນ |
| 6530 | ຄັງບຳນານ | ກະຊວງການເງິນ |
| 6611 | ການບໍລິຫານຕະຫລາດການເງິນ | ກະຊວງການເງິນ |
| 6612 | ການຄ້ຳປະກັນ ແລະ ສັນຍາຊື້ຂາຍນາຍໜ້າ | ກະຊວງການເງິນ |
| 6619 | ບັນດາກິດຈະກຳຊ່ວຍໜູນ ກິດຈະກຳການບໍລິການດ້ານການເງິນ | ກະຊວງການເງິນ |
| 6630 | ການເຄື່ອນໄຫວບໍລິຫານກອງທຶນ | ກະຊວງການເງິນ |

| | | |
|---|---|---|
| **ສາທາລະນະສຸກ ແລະ ບັນດາວຽກງານ ກິດຈະກໍາດ້ານສັງຄົມ** | | |
| 8610 | ກິດຈະກໍາໂຮງພະຍາບານ | ກ/ຊ ສາທາລະນະສຸກ |
| 8620 | ກິດຈະກໍາທາງການແພດ ແລະ ທັນຕະກໍາ | ກ/ຊ ສາທາລະນະສຸກ |
| 8690 | ກິດຈະກໍາດ້ານສາທາລະນະສຸກອື່ນໆ | ກ/ຊ ສາທາລະນະສຸກ |

| | | |
|---|---|---|
| **ສິນລະປະ, ການບັນເທີງ ແລະ ການພັກຜ່ອນ** | | |
| 9200 | ກິດຈະກໍາການສ່ຽງໂຊກ ແລະ ການພະນັນ ຕ່າງໆ | ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |
| 9321 | ກິດຈະກໍາ ສວນສະໜຸກ | ອົງການທ່ອງທ່ຽວແຫ່ງຊາດ, ກ/ຊ ຖະແຫຼງຂ່າວ ແລະ ວັດທະນະທໍາ |